ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ຫ້ອງການ

ເລກທີ 0226 /ຫກ

ນະຄອນຫຼວງວຽງຈັນ, ວັນທີ .27....ມັງກອນ 2026

# ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ພາຍໃນ ນະຄອນຫຼວງວຽງຈັນ.

ເລື່ອງ: ແຈ້ງເຊີນເຂົ້າຮ່ວມປະມູນສົມທຽບລາຄາກ່ຽວກັບວຽກບໍລິຫານຂອງ ກະຊວງ ອຸດສາຫະກໍາ ແລະ ການຄ້າ ປະຈໍາປີ 2026.

- ອີງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ນຍ, ລົງວັນທີ 02 ພະຈິກ 2017.
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມຂໍ້ຕົກລົງວ່າດ້ວຍກໍານົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 0200/ກງ, ລົງວັນທີ 25 ມັງກອນ 2023.

ຫ້ອງການ ກະຊວງອຸດສາຫະກໍາ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານຕ່າງໆພາຍໃນນະຄອນຫຼວງວຽງຈັນ ທີ່ສົນໃຈເຂົ້າຮ່ວມປະມູນສົມທຽບລາຄາເພື່ອສະໜອງບັນດາໜ້າວຽກຮັບໃຊ້ບໍລິຫານຂອງກະຊວງອຸດສາຫະ ກໍາ ແລະ ການຄ້າ ປະຈໍາປີ 2026 ດ້ວຍທຶນຂອງລັດດັ່ງລາຍລະອຽດລຸ່ມນີ້:

1. ການສະໜອງເຄື່ອງຮັບໃຊ້ຫ້ອງການ ແລະ ປະເພດເຄື່ອງພັດສະດຸ ເຊັ່ນ: ເຄື່ອງໃຊ້ຫ້ອງການທົ່ວໄປ, ເຄື່ອງອະນາໄມຕຶກສໍານັກງານ, ເຄື່ອງຮັບແຂກຄະນະນໍາກະຊວງ ແລະ ໂຕະ,ຕັ່ງ;
2. ວຽກບໍາລຸງຮັກສາສ້ອມແປງສໍານັກງານ ແລະ ສິ່ງປຸກສ້າງ, ວຽກສ້ອມແປງເຄື່ອງຈັກ ແລະ ວັດຖຸອຸປະກອນ ເຊັ່ນ: ການບໍາລຸງຮັກສາສໍານັກງານ, ປ່ຽນຖ່າຍລະບົບນໍ້າປະປາ, ກໍ່ສ້າງສ້ອມແປງນ້ອຍ, ການສ້ອມແປງບໍາລຸງຮັກສາປ່ຽນຖ່າຍອາໄຫຼ່ລະບົບແອເຢັນ, ລະບົບໄຟຟ້າ;
3. ການສ້ອມແປງພາຫະນະ ເຊັ່ນ: ການບໍລິການສ້ອມແປງ, ປ່ຽນຖ່າຍອາໄຫລ່ ແລະ ບໍາລຸງຮັກສາພາຫະນະ.
4. ການບໍລິການອະນາໄມ ຕຶກສໍານັກງານຂອງກະຊວງອຸດສາຫະກໍາ ແລະ ການຄ້າ (ສໍານັກງານບ້ານໂພນໄຊ)

ໃນ **04 ລາຍການ** ທີ່ກ່າວມາຂ້າງເທິງນີ້, ບັນດາບໍລິສັດ, ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ທີ່ຈະເຂົ້າຮ່ວມການປະມູນ ແມ່ນມີສິດເລືອກໄດ້ພຽງ **01 ລາຍການ** ເທົ່ານັ້ນ ແລະ ຕ້ອງໄດ້ປະຕິບັດຕາມລະບຽບ ແລະ ເງື່ອນໄຂດັ່ງນີ້:

I. **ກໍານົດເວລາ:**

- ສາມາດຕິດຕໍ່ພົວພັນຊື້ຊອງປະມູນໄດ້ທີ່ ຫ້ອງການ ກະຊວງອຸດສາຫະກໍາ ແລະ ການຄ້າ (ພະແນກບໍລິຫານ ແລະ ພິທີການ) ໃນວັນລັດຖະການ ນັບແຕ່ວັນທີ:...27 ມັງກອນ...ຫາ...10 ກຸມພາ...ແລະ ສົ່ງຊອງປະມູນໃຫ້ຄະ ນະກໍາມະການປະມູນ ບໍ່ໃຫ້ກາຍເວລາ:...9:00...ໂມງຂອງວັນທີ...10 ກຸມພາ 2026
- ເວລາເປີດຊອງປະມູນ:......9:00..........ໂມງຂອງວັນດຽວກັນ ໂດຍຊ່ອງໜ້າຄະນະກໍາມະການປະມູນ.
- ລາຄາຊອງປະມູນ ຈ່າຍເປັນເງິນສົດ...1,000,000.........ກີບ/ຊອງ (ເງິນຊື້ຊອງປະມູນແມ່ນບໍ່ໄດ້ສົ່ງຄືນ).

- ພາຍຫຼັງສຳເລັດການເປີດຊອງປະມູນ ຈະແຈ້ງຜົນການປະມູນໃຫ້ບັນດາຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານຮັບຊາບ ພາຍໃນ 07 ວັນ ແລະ ແຈ້ງເຊີນໃຫ້ບັນດາຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ທີ່ຊະນະການປະມູນເຂົ້າມາຮ່ວມຕົກລົງເຈລະຈາເຊັນສັນຍາກັບຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຕາມລະບຽບການ.

II. ເອກະສານ ຄັດຕິດມາພ້ອມຊອງປະມູນຕ້ອງປະກອບມີຄື:

- ໃບທະບຽນວິສາຫະກິດທີ່ຖືກຕ້ອງ;
- ໃບທະບຽນອາກອນ ຫຼື ໃບຢັ້ງຢືນການເສຍອາກອນ ປະຈຳປີ 2025;
- ໃບບິນອາກອນສະເພາະຂອງວິສາຫະກິດ;
- ໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການທີ່ກ່ຽວຂ້ອງ (ຖ້າມີ);
- ມີແຜນວາດທີ່ຕັ້ງຂອງວິສາຫະກິດ, ທີ່ຢູ່, ເບີໂທ ຫຼື Email;
- ລະບຸສະພາບເຄື່ອງຂອງ, ອຸປະກອນ ແລະ ສິນຄ້າຜະລິດຈາກປະເທດໃດຕາມລາຍການທີ່ກຳນົດຢູ່ໃນຕາຕະລາງ, ສະຫຼຸບສັງລວມຕົວເລກທັງໝົດຂອງແຕ່ລະລາຍການ ແລະ ຕົວເລກລວມຂອງແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ຊັດເຈນ). ທຸກໆລາຍການຕ້ອງໃສ່ລາຄາເປັນເງິນກີບ (ເປັນເງິນສົດ ແລະ ເງິນໂອນ)ໃຫ້ຄົບຖ້ວນຕາມຕາຕະລາງ (ລາຄາທີ່ໃສ່ໃນຕາຕະ ລາງແມ່ນລວມອາກອນທັງໝົດ), ຖ້າບໍ່ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງຖືວ່າຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ນັ້ນແມ່ນຖືກສະຫຼະສິດ ແລະ ຈະບໍ່ຮັບພິຈາລະນາ.

III. ເງື່ອນໄຂມາດຖານ ແລະ ຄວາມພ້ອມຂອງວິສາຫະກິດ:

- ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ຕ້ອງສະໜອງວັດຖຸອຸປະກອນໃຫ້ຄູ່ສັນຍາຕາມກຳນົດເວລາທີ່ຕົກລົງກັນໄວ້ໃນສັນຍາ;
- ຕ້ອງເປັນວິສາຫະກິດ, ຫ້າງຮ້ານທີ່ມີການເຄື່ອນໄຫວດຳເນີນທຸລະກິດທີ່ມີປະສົບການ 02 ປີ ຂຶ້ນໄປ;
- ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ຕ້ອງມີວິຊາການ, ນາຍຊ່າງທີ່ມີປະສົບການໃນການຕິດຕັ້ງ, ສ້ອມແປງຢ່າງໜ້ອຍ 02 ຄົນຂຶ້ນໄປ;
- ການຕອບຮັບຕໍ່ຂໍ້ສະເໜີໃນເວລາແຈ້ງວຽກໃຫ້ ແມ່ນ ບໍ່ເກີນ 1-2 ວັນ;

IV. ເງື່ອນໄຂການຊຳລະສະສາງ:

ການຊຳລະສະສາງແມ່ນນຳໃຊ້ຮ່ວງເງິນງົບປະມານ ປະຈຳປີ 2026 ຂອງກະຊວງອຸດສາຫະກຳ ແລະ ການຄ້າ ດ້ວຍລະບົບເງິນໂອນ (ປະຕິບັດຕາມລະບຽບຂອງກະຊວງການເງິນ) ຊຶ່ງການຊຳລະແມ່ນເປັນ 4 ງວດ/ປີ ໂດຍອີງໃສ່ການປະກອບເອກະສານຄົບຖ້ວນ, ຖືກຕ້ອງ ຂອງບັນດາບໍລິສັດ, ວິສາຫະກິດ, ຫ້າງຮ້ານ ທັນຕາມກຳນົດເວລາໃນແຕ່ລະງວດ ແລະ ມອບໃຫ້ກັບກະຊວງ ອຄ ເພື່ອດຳເນີນການໂອນເຂົ້າບັນຊີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານ ທີ່ມີຄວາມພ້ອມຕາມເງື່ອນໄຂ ແລະ ຈຸດປະສົງທີ່ກ່າວມາຂ້າງເທິງນີ້ດຳເນີນການດ້ວຍ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ປອ. ບົວວັນ ວິລະວົງ

**ຕິດຕໍ່ພົວພັນ:**
ທ່ານ ນ. ມະນີພອນ ແກ້ວບຸນຄໍ້າ 020 56922891
ທ.ແສງຕາວັນ ຈັນດາວີ 020 99722047, 021 412000,